**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ ເລກທີ 324 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 23 ມັງກອນ 2018

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກິລາລະດັບສູງ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 67/ນຍ, ລົງວັນທີ 3 ກຸມພາ 2017;
- ອີງຕາມ ການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບກົງຈັກ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃນດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກິລາລະດັບສູງ ແນໃສ່ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນພັດທະນາວຽກງານກິລາລະດັບສູງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງແລະພາລະບົດບາດ

ກົມກິລາລະດັບສູງຂຽນດ້ວຍຕົວອັກສອນຫຍໍ້ **''ກສ''** ເປັນກົງຈັກບໍລິຫານໃນໂຄງປະກອບການຈັດຕັ້ງຂອງກະຊວງສຶກສາທິການ ແລະ ກິລາມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະມົນຕີ ໃນການ ຊີ້ນຳ, ຊຸກຍູ້, ສົ່ງເສີມວຽກງານກິລາ-ກາຍຍະກຳລະດັບສູງ, ສ້າງ ແລະ ພັດທະນານັກກິລາ ອາຊີບ ເພື່ອເຂົ້າຮ່ວມການແຂ່ງຂັນໃນພາກພື້ນ ແລະ ສາກົນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມກິລາລະດັບສູງ ມີໜ້າທີ່ຕົ້ນຕໍດັ່ງນີ້:

1. ຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄໍາສັ່ງຂອງພັກ, ກົດໝາຍຂອງລັດ, ທິດທາງ, ແຜນການ ແລະ ຍຸດທ ະສາດຂອງກະຊວງສຶກສາທິການ ແລະ ກິລາ ເພື່ອສ້າງເປັນແຜນພັດທະນາວຽກງານກິລາລະດັບສູງ;
2. ສ້າງ, ປັບປຸງນິຕິກໍາ ແລະ ມາດຕະຖານຕ່າງໆ ເພື່ອບໍລິຫານຄຸ້ມຄອງວຽກງານກິລາ-ກາຍຍະກໍາລະດັບສູງ;
3. ຊີ້ນໍາ ການສ້າງຄວາມເຂັ້ມແຂງ ໃຫ້ແກ່ຜູ້ບໍລິຫານ, ຄູຝຶກ, ກໍາມະການຕັດສິນ ແລະ ບຸກຄະລາກອນກິລາ-ກາຍຍະກໍາລະດັບສູງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
4. ເປັນໃຈກາງໃນການປະສານງານການກະກຽມຈັດຕັ້ງງານມະຫາກໍາກິລາແຫ່ງຊາດ ແລະ ຄຸ້ມຄອງເຕັກນິກໃນການແຂ່ງຂັນກິລາ ລະດັບຊາດ;
5. ຊີ້ນໍາ, ສ້າງ, ປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືການຝຶກແອບ, ກົດລະບຽບ ແລະ ກະຕິກາກິລາສາກົນ ກ່ຽວກັບກິລາ-ກາຍຍະກໍາລະດັບສູງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
6. ຄົ້ນຄ້ວາ, ວິໄຈ, ເກັບກໍາຂໍ້ມູນສະຖິຕິ, ເຜີຍແຜ່ວຽກງານວິທະຍາສາດການກິລາ ແລະ ຂໍ້ມູນຂ່າວສານກິລາລະດັບສູງ;
7. ຄຸ້ມຄອງຊ່ຽວຊານ, ນັກວິຊາການ, ຄູຝຶກ ແລະ ອາສາສະໝັກກິລາຕ່າງປະເທດ ທີ່ມາປະຕິບັດວຽກງານພັດທະນາກິລາລະດັບສູງຢູ່ ສປປ ລາວ;
8. ສ້າງຖານຂໍ້ມູນກ່ຽວກັບການຄຸ້ມຄອງວຽກງານກິລາ-ກາຍຍະກໍາລະດັບສູງ ໂດຍອີງໃສ່ມາດຕະຖານການຄຸ້ມຄອງຂໍ້ມູນຂະແໜງການສຶກສາທິການ ແລະ ກິລາ ;
9. ຄຸ້ມຄອງ ແລະ ຊຸກຍູ້ ບັນດາສະຫະພັນກິລາແຫ່ງຊາດ ໃນການເຄື່ອນໄຫວກິລາຢູ່ພາຍໃນ ແລະ ຕ່າງປະເທດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍກິລາ- ກາຍຍະກໍາ, ທໍາມະນູນຂອງໂອແລມປິກສາກົນ ແລະ ທໍາມະນູນຂອງສະຫະພັນກິລາສາກົນ;
10. ຊີ້ນໍາ ແລະ ຄຸ້ມຄອງ , ສູນຝຶກກິລາແຫ່ງຊາດ, ໂຮງຮຽນພອນສະຫວັນກິລາ-ກາຍຍະກໍາ, ສະໜາມກິລາແຫ່ງຊາດຫຼັກ 16 ແລະ ສະໜາມກິລາລະດັບຊາດ;
11. ກວດກາ, ຕິດຕາມ ແລະ ປະເມີນຜົນການປະຕິບັດແຜນພັດທະນາວຽກງານກິລາລະດັບສູງ ໃນແຕ່ລະໄລຍະ;
12. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງລັດຖະມົນຕີ;

**ມາດຕາ 4 ຂອບເຂດສິດ**

1. ສະເໜີແຜນການ ແລະ ແຜນງົບປະມານເພື່ອພັດທະນາວຽກງານທີ່ຕົນຮັບຜິດຊອບຕໍ່ລັດຖະມົນຕີ;
2. ສະເໜີລັດຖະມົນຕີ ພິຈາລະນາ, ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກບັນດານິຕິກໍາຄຸ້ມຄອງການສຶກສາ

ແລະ ກິລາທີ່ບໍ່ສອດຄ່ອງ;

3. ສະເໜີຕໍ່ລັດຖະມົນຕີ ພິຈາລະນາ, ອະນຸມັດ, ສ້າງຕັ້ງ ຫຼື ຍົກເລີກຫົວໜ່ວຍການຈັດຕັ້ງຕ່າງໆ ຂອງກົມ.
4. ສະເໜີລັດຖະມົນຕີແຕ່ງຕັ້ງ, ປົດຕໍາແໜ່ງ, ຍົກຍ້າຍ, ຊັບຊ້ອນ, ຈັດວາງຜູ້ບໍລິຫານ, ພະນັກງານວິຊາການ ທີ່ຢູ່ໃນຄວາມຮັບຊອບຂອງຕົນຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມລະບຽບກົດໝາຍ;
5. ສະເໜີການປະຕິບັດນະໂຍບາຍຕ່າງໆ ຕໍ່ຜູ້ມີຜົນງານ ແລະ ປະຕິບັດວິໄນ ຕໍ່ຜູ້ລະເມີດໃນການເຂົ້າຮ່ວມ ແຂ່ງຂັນກິລາ-ກາຍຍະກໍາກິລາລະດັບສູງ;
6. ຄຸ້ມຄອງ, ນໍາໃຊ້ງົບປະມານ, ວັດຖຸ-ຊັບສິນ, ກອງທຶນ, ທຶນຊ່ວຍເຫຼືອປະເພດຕ່າງໆ ຕາມການ ອະນຸມັດ ຂອງລັດຖະມົນຕີ;
7. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມການ ອະນຸມັດຂອງລັດຖະມົນຕີ;
8. ສະເໜີລັດຖະມົນຕີປົກປ້ອງ , ຄຸ້ມຄອງບຸກຄະລາກອນ , ຊັບສິນ, ລິຂະສິດທາງດ້ານການສຶກສາ ແລະ ກິລາ;
9. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງລັດຖະມົນຕີ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກຂອງກົມກິລາລະດັບສູງ ປະກອບມີ 4 ພະແນກຄື:

1. ພະແນກບໍລິຫານ;
2. ພະແນກຈັດການແຂ່ງຂັນ;
3. ພະແນກພັດທະນາກິລາ;
4. ພະແນກຄຸ້ມຄອງຂໍ້ມູນກິລາລະດັບສູງ.

### ມາດຕາ 6 ໂຄງປະກອບບຸກຄະລະກອນ ແລະ ຕໍາແໜ່ງງານ

ກົມກິລາລະດັບສູງ ມີຕໍາແໜ່ງງານຕ່າງໆ ມີບຸກຄະລາກອນ ຈໍານວນ 30 ຕໍາແໜ່ງ ລາຍລະອຽດດັ່ງນີ້:

1. ຫົວໜ້າກົມ 1 ຕໍາແໜ່ງ;
2. ຮອງຫົວໜ້າກົມ 3 ຕໍາແໜ່ງ;
3. ຫົວໜ້າພະແນກ 4 ຕໍາແໜ່ງ;
4. ຮອງຫົວໜ້າພະແນກ 7 ຕໍາແໜ່ງ;
5. ພະນັກງານວິຊາການ 15 ຕໍາແໜ່ງ ໃນນັ້ນສັງກັດຢູ່ :
   - ພະແນກບໍລິຫານ 4 ຕໍາແໜ່ງ;
   - ພະແນກຈັດການແຂ່ງຂັນ 3 ຕໍາແໜ່ງ;

- ພະແນກພັດທະນາກິລາ 5 ຕຳແໜ່ງ;
- ພະແນກຄຸ້ມຄອງຂໍ້ມູນກິລາລະດັບສູງ 3 ຕຳແໜ່ງ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

### ມາດຕາ 7 ໜ້າທີ່ ພະແນກບໍລິຫານ

ພະແນກບໍລິຫານ ມີໜ້າທີ່ດັ່ງນີ້:

1. ຄຸ້ມຄອງເອກະສານທາງລັດຖະການ ແລະ ສາລະບານ;
2. ສ້າງ ແລະ ປັບປຸງນິຕິກຳຕ່າງໆເພື່ອບໍລິຫານຄຸ້ມຄອງຂອງກົມກິລາລະດັບສູງ;
3. ສັງລວມ, ສະເໜີແຜນງົບປະມານຮັບໃຊ້ປະຈຳປີ , ແຜນງົບປະມານຮັບໃຊ້ການແຂ່ງຂັນພາຍໃນ ແລະ ຕ່າງປະເທດ ພ້ອມທັງສະຫຼຸບລາຍງານ;
4. ຕິດຕາມການແບ່ງປັນງົບປະມານຈາກກະຊວງສຶກສາທິການ ແລະ ກິລາ ແລະ ຮັບຜິດຊອບຄຸ້ມຄອງວຽກລາຍຮັບ-ລາຍຈ່າຍລວມທັງເງິນຊ່ວຍເຫຼືອຕ່າງໆຂອງກົມກິລາລະດັບສູງ;
5. ຄົ້ນຄວ້ານະໂຍບາຍຕ່າງໆ ແລະ ສ້າງຄວາມເຂັ້ມແຂງທາງດ້ານວິຊາການກິລາໃຫ້ແກ່ ພະນັກງານລັດຖະກອນພາຍໃນກົມ, ຄູຝຶກ, ກຳມະການຕັດສິນ, ນັກກິລາ ແລະ ຕໍ່ບັນດາສະຫະພັນກິລາແຫ່ງຊາດ;
6. ປະຕິບັດໜ້າທີ່ເປັນເລຂານຸການ ໃຫ້ແກ່ຫົວໜ້າກົມ , ຮອງກົມກິລາລະດັບສູງ ແລະ ວຽກງາ ນສາລະບັນອື່ນໆຂອງກົມກິລາລະດັບສູງ;
7. ຄຸ້ມຄອງ ແລະ ອຳນວຍຄວາມສະດວກໃຫ້ແກ່ຊ່ຽວຊານ , ອາສາສະໝັກຕ່າງປະເທດທີ່ມາປ ະຕິບັດວຽກງານພັດທະນາກິລາລະດັບສູງ;
8. ຂຶ້ນບັນຊີພາຫະນະ, ວັດສະດຸ, ອຸປະກອນສ່ວນລວມຂອງກົມກິລາລະດັບສູງ;
9. ປະສານສົມທົບກັບບັນດາພະແນກການພາຍໃນກົມ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
10. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຫົວໜ້າກົມ;

### ມາດຕາ 8 ໜ້າທີ່ພະແນກພັດທະນາກິລາ

ພະແນກພັດທະນາກິລາ ມີໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍແຜນຍຸດທະສາດ , ແຜນພັດທະນາບຸກຄະລາກອນກິລາລະດັບສູງ ແລະ ຂຶ້ນແຜນງົບປະມານຮັບໃຊ້;
2. ຄົ້ນຄ້ວາ, ສ້າງ ແລະ ປັບປຸງນິຕິກຳຕ່າງໆ ເພື່ອບໍລິຫານຄຸ້ມຄອງວຽກງານການພັດທະນາບຸກຄະລາກອນການກິລາ;
3. ປະສານສົມທົບກັບຄະນະກຳມະການໂອແລມປິກແຫ່ງຊາດລາວ , ບັນດາສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງສ້າງຫຼັກສູດ ແລະ ຈັດຝຶກອົບຮົມຍົກລະດັບໃຫ້ແກ່ບຸກຄະລາກອນກິລາລະດັບສູງ;
4. ຄົ້ນຄວ້າ, ສ້າງ, ແປ ແລະ ຮຽບຮຽງ ເອກະສານ, ຕຳລາຄູ່ມືການຝຶກແອບ ແລະ ວິທະຍາສາດການກິລາ;

5. ຄົ້ນຄ້ວາ, ວິໄຈ ວຽກງານວິທະຍາສາດການກິລາສະໜອງໃຫ້ແກ່ການພັດທະນາບຸກຄະລາກອນການກິລາ ລະດັບສູງ;
6. ປະສານສົມທົບກັບຄະນະກຳມະການໂອແລມປິກ , ບັນດາສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ ກ່ຽວຂ້ອງໃນການກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນໃນລະດັບອະນຸພາກພື້ນ ແລະ ສາກົນ;
7. ປະສານສົມທົບກັບອົງການຈັດຕັ້ງກິລາສາກົນ ໃນການພັດທະນາກິລາລະດັບສູງ;
8. ປະສານສົມທົບກັບບັນດາພະແນກການພາຍໃນກົມ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
9. ຕິດຕາມ, ປະເມີນ ແລະ ສະຫຼຸບຕີລາຄາຜົນການຈັດຕັ້ ງປະຕິບັດວຽກງານຂອງພະແນກ ແລະ ລາຍງານ ໃຫ້ພະແນກບໍລິຫານ ແລະ ຄະນະກົມເປັນປົກກະຕິ;
10. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຫົວໜ້າກົມ.

**ມາດຕາ 9 ໜ້າທີ່ພະແນກຈັດການແຂ່ງຂັນ**

ພະແນກຈັດການແຂ່ງຂັນ ມີໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍແຜນຍຸດທະສາດ , ວາງແຜນການພັດທະນາລະບົບຈັດການແຂ່ງຂັນກິລາລະ ດັບສູງ ແລະ ຂຶ້ນແຜນງົບປະມານຮັບໃຊ້;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກຳຕ່າງໆ ເພື່ອບໍລິຫານຄຸ້ມຄອງວຽກງານຈັດການແຂ່ງຂັນກິລາລະດັບສູງ;
3. ຊຸກຍູ້ ແລະ ສົ່ງເສີມ ບັນດາສະຫະພັນກິລາປະເພດຕ່າງໆໃນການຈັດຕັ້ງການແຂ່ງຂັນໃຫ້ຖືກຕ້ອງຕາມ ລະບົບ ແລະ ມາດຕະຖານສາກົນ;
4. ຄົ້ນຄວ້າ, ສ້າງ, ແປ ແລະ ຮຽບຮຽງເອກະສານ, ປຶ້ມກະຕິກາກິລາ, ຂໍ້ກຳນົດ, ກົດລະບຽບການແຂ່ງຂັນ;
5. ຄົ້ນຄ້ວາ, ວິໄຈ ກ່ຽວກັບການບໍລິຫານຄຸ້ມຄອງລະບົບການຈັດການແຂ່ງຂັນໃຫ້ໄດ້ມາດຕະຖານສາກົນ;
6. ປະສານສົມທົບກັບຄະນະກຳມະການໂອແລມປິກ , ບັນດາສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ ກ່ຽວຂ້ອງໃນການກະກຽມ ແລະ ຈັດການແຂ່ງຂັນໃນລະດັບອະນຸພາກພື້ນ , ພາກພື້ນ ແລະ ສາກົນ ຢູ່ ສປປ ລາວ;
7. ສົມທົບກັບບັນດາສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ນຳສະເໜີຂໍ ອະນຸມັດແຕ່ງຕັ້ງຄະນະຮັບຜິດຊອບຄວບຄຸມການແຂ່ງຂັນ , ຄະນະຮັບຜິດຊອບຈັດການແຂ່ງຂັນ , ກຳມະການຝ່າຍສະໜາມ, ກຳມະການຕັດສິນ;
8. ປະສານສົມທົບກັບບັນດາພະແນກການພາຍໃນກົມ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
9. ຕິດຕາມ, ປະເມີນຜົນ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານຂອງພະແນກ ແລະ ລາຍງານ ໃຫ້ພະແນກບໍລິຫານ ແລະ ຄະນະກົມເປັນປົກກະຕິ;
10. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງຫົວໜ້າກົມ.

**ມາດຕາ 10 ໜ້າທີ່ ພະແນກຄຸ້ມຄອງຂໍ້ມູນກິລາລະດັບສູງ**

ພະແນກຄຸ້ມຄອງຂໍ້ມູນກິລາລະດັບສູງ ມີໜ້າທີ່ດັ່ງນີ້:

1. ສ້າງແຜນຍຸດທະສາດ , ແຜນການ ຈັດຕັ້ງປະຕິບັດ ແລະ ແຜນຄາດຄະເນງົບປະມານຮັບໃຊ້ວຽກງານ ພັດທະນາກິລາລະດັບສູງ ພ້ອມສ້າງແຜນການ ແລະ ຂຶ້ນແຜນງົບປະມານຮັບໃຊ້ວຽກງານພາຍໃນ ພະ ແນກ;
2. ຄົ້ນຄ້ວາ, ສ້າງ ແລະ ປັບປຸງນິຕິກຳຕ່າງໆ ເພື່ອບໍລິຫານຄຸ້ມຄອງວຽກງານການພັດທະນາບຸກຄະລາກອນ ການກິລາ;

3. ປະສານສົມທົບກັບຄະນະກຳມະການໂອແລມປິກແຫ່ງຊາດລາວ , ບັນດາສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວສ້າງເຄື່ອງມືເກັບກຳຂໍ້ມູນກິລາລະດັບສູງ;
4. ຄົ້ນຄວ້າ ແລະ ວິໃຈໃນການສ້າງລະບົບຖານຂໍ້ມູນວຽກງານກິລາລະດັບສູງໃຫ້ໄດ້ມາດຕະຖານ ແລະ ທັນສະໄໝ;
5. ປະສານສົມທົບກັບບັນດາສະຫະພັນກິລາແຫ່ງຊາດ, ແຂວງ, ນະຄອນຫຼວງ ແລະ ພາກສ່ວນ ທີ່ກ່ຽວຂ້ອງເພື່ອເກັບກຳຂໍ້ມູນ-ສະຖິຕິກິລາລະດັບສູງ;
6. ສະໜອງຂໍ້ມູນ ແລະ ເຜີຍແຜ່ໃຫ້ແກ່ພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອສ້າງປະໂຫຍດໃຫ້ແກ່ການພັດທະນາກິລາລະດັບສູງ;
7. ສຳຫຼວດຄວາມຕ້ອງການ, ການກໍ່ສ້າງ, ຍົກລະດັບບຸກຄະລາກອນກິລາລະດັບສູງທີ່ມີເປົ້າໝາຍ;
8. ປະສານສົມທົບກັບບັນດາພະແນກການພາຍໃນກົມ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;
9. ຕິດຕາມ , ປະເມີນຜົນ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ແຜນຍຸດທະສາດ ແລະ ແຜນຈັດຕັ້ງປະຕິບັດຂອງກົມ ພ້ອມ ວຽກງານຂອ ງພະແນກລາຍງານໃຫ້ພະແນກບໍລິຫານ ແລະ ຄະນະກົມ ເປັນປົກກະຕິ;
10. ປະຕິບັດວຽກງານອື່ນໆຕາມການມອບໝາຍຂອງຫົວໜ້າກົມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 11 ຫຼັກການ

ກົມກິລາລະດັບສູງ ເຄື່ອນໄຫວວຽກງານຕາມຫຼັກການດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວ ຂອງກົມກິລາລະດັບສູງ ແມ່ນອີງໃສ່ລະບຽບກົດໝາຍ, ລະບຽບການ, ຫຼັກການລວມຂອງພັກ-ລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ແລະ ນຳເອົາແຜນການປະຈຳປີ.ປີ ຂອງກະຊວງມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ 5 ແຜນ ,

### ມາດຕາ 12 ແບບແຜນວິທີເຮັດວຽກ

ກົມກິລາລະດັບສູງ ມີແບບແຜນວິທີເຮັດວຽກດັ່ງນີ້:

1. ເຮັດວຽກມີແບບແຜນຈຸດນີ້ງານຢ່າງໄຂວຽກແກ້ ,ອຽດລະການງານ ແລະ ໂຄງແຜນ ,ສຸມ ແລະ ເປົ້າໝາຍໃນແຕ່ລະໄລຍະກັບແຟັນແໜ້ນຢ່າງທົບສົມສານປະ ,ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ວຽກງານກົມກົມກິລາລະດັບສູງ ໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ ,ຕາມຕິດ ,ຊຸກຍູ້ບຖອນຖອດຫຼຸບສະ ີ,ດຮຽນ ແລະ ຕີ ລາຄາຜົນໄດ້ຮັບ ,ຜົນເສຍ;
3. ປະຕິບັດລະບອບປະຊຸມປະຈຳເດືອນ 3 ,ເດືອນ 6 ,ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ

ໃຫ້ຂັ້ນເທິງ ແລະ ລັດຖະບານເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 13 ງົບປະມານ ແລະ ຕາປະທັບ

ກົມກິລາລະດັບສູງ ມີງົບປະມານຮັບໃຊ້ວຽກງານຂອງຕົນ ຊຶ່ງໄດ້ມາຈາກງົບປະມານ ຂອງກະຊວງສຶກສາທິການແລະກິລາ, ການຊ່ວຍເຫຼືອ, ການຮ່ວມມືຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນທັງພາຍໃນ ແລະຕ່າງປະເທດ ແລະ ມີຕາປະທັບ ເພື່ອຮັບໃຊ້ວຽກງານທາງລັດຖະການ.

### ມາດຕາ 14 ການຜັນຂະຫຍາຍ

ມອບໃຫ້ກົມກິລາລະດັບສູງ ກໍານົດໜ້າທີ່, ກິດຈະກໍາລະອຽດ ແລະ ກໍານົດມາດຕະຖານແຕ່ລະຕໍາແໜ່ງງານ ເພື່ອນໍາສະເໜີລັດຖະມົນຕີບັນຈຸ ແລະ ສັບຊ້ອນພະນັກງານເຂົ້າໃສ່ຕໍາແໜ່ງງານຕາມຄວາມເໝາະສົມ.

### ມາດຕາ 15 ການຈັດຕັ້ງປະຕິບັດ

ບັນດາ ຫ້ອງການ, ກົມ, ອົງການທຽບເທົ່າ, ສະຖາບັນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນ ຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນ.

### ມາດຕາ 16 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 1153/ສສກ.ຈຕ, ລົງວັນທີ 24 ເມສາ 2012. ທຸກຂໍ້ຕົກລົງ ແລະ ເອກະສານຕ່າງໆ ຊຶ່ງປະກາດໃຊ້ໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນຖືກລົບລ້າງ.

**ລັດຖະມົນຕີ**

ກະຊວງສຶກສາທິການແລະກິລາ ... ລັດຖະມົນຕີ

**ນ.ແສງເດືອນ ຫຼ້າຈັນທະບູນ**

**ບ່ອນນໍາສົ່ງ:**

1. ກະຊວງພາຍໃນ 1 ສະບັບ.
2. ຫ້ອງການກະຊວງ 1 ສະບັບ.
3. ບັນດາກົມ, ສູນ ແລະ ສະຖາບັນພາກສ່ວນລະ 1 ສະບັບ .
4. ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ພາກສ່ວນລະ 1 ສະບັບ.
5. ພາກສ່ວນທີ່ກ່ຽວຂ້ອງ 3 ສະບັບ.
6. ເກັບມ້ຽນ 3 ສະບັບ.